**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ — ເລກທີ 490 /ລບ
ນະຄອນຫຼວງວຽງຈັນ,ວັນທີ 10 / 07 / 25

# ດຳລັດ
# ວ່າດ້ວຍການຄຸ້ມຄອງ ການກູ້ຢືມ ແລະ ການຄ້ຳປະກັນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ສະບັບເລກທີ 46/ສພຊ, ລົງວັນທີ 18 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີຂອງກະຊວງການເງິນ ສະບັບເລກທີ 3749/ກງ, ລົງວັນທີ 18 ຕຸລາ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານຄຸ້ມຄອງ ການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່ ແລະ ການຄ້ຳປະກັນການກູ້ຢືມ ເພື່ອຮັບປະກັນໃຫ້ການຈັດຕັ້ງ ປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ລວມສູນ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ສະໜອງທຶນ, ພັດທະນາຕະຫຼາດທຶນພາຍໃນ, ຮັບປະກັນຄວາມໝັ້ນທ່ຽງຂອງເສດຖະກິດ, ຫຼຸດຜ່ອນ ຄ່າໃຊ້ຈ່າຍ, ຄວາມສ່ຽງຂອງ ໜີ້ສິນ ແລະ ບໍ່ກະທົບຕໍ່ຍອດໜີ້ສິນ ຕາມແຜນຍຸດທະສາດຄຸ້ມຄອງ ໜີ້ສິນສາທາລະນະ ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຄຸ້ມຄອງການກູ້ຢືມ ແລະ ການຄ້ຳປະກັນ

ການຄຸ້ມຄອງການກູ້ຢືມ ແລະ ການຄ້ຳປະກັນ ແມ່ນ ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່ ແລະ ການຄ້ຳປະກັນການກູ້ຢືມ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄຳເຫັນດ້ານກົດໝາຍ** ໝາຍເຖິງ ເອກະສານທາງດ້ານກົດໝາຍທີ່ອອກໃຫ້ໂດຍກະຊວງ ຍຸຕິທຳ ພາຍຫຼັງ ການເຊັນສັນຍາການກູ້ຢືມໂດຍກົງ ລະຫວ່າງ ລັດຖະບານ ແລະ ຜູ້ໃຫ້ກູ້ຢືມ;
2. **ຜູ້ໄດ້ຮັບການຄ້ຳປະກັນ** ໝາຍເຖິງ ລັດວິສາຫະກິດ ທີ່ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການລົງທຶນ ທີ່ເປັນບູລິມະສິດ ຫຼື ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ມີແຫຼ່ງງົບປະມານມາຊຳລະ ທີ່ແນ່ນອນ, ລັດວິສາຫະກິດ ຫຼື ວິສະຫະກິດ ທີ່ໄດ້ຮັບມອບໝາຍໃຫ້ປະຕິບັດລົງທຶນຂອງລັດ ໃນຮູບແບບການ ລົງທຶນທີ່ມີສ່ວນຮ່ວມ ລະຫວ່າງ ພາກລັດ ແລະ ເອກະຊົນ;

3. **ເພດານການກູ້ຢືມ** ໝາຍເຖິງ ຕົວເລກການກູ້ຢືມລວມສູງສຸດໃນແຕ່ລະປີ ທີ່ລັດຖະບານຮັບຮອງ ບົນພື້ນຖານ ອັດຕາສ່ວນໜີ້ສິນສາທາລະນະ ທີ່ສະພາແຫ່ງຊາດ ຮັບຮອງ;

4. **ຄ່າຄ້ຳປະກັນ** ໝາຍເຖິງ ຄ່າຄຸ້ມຄອງຄວາມສ່ຽງ ທີ່ກະຊວງການເງິນ ໄດ້ຮັບຈາກການອອກໜັງສືຄ້ຳປະກັນ.

## ມາດຕາ 4 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ ເຄື່ອນໄຫວ ແລະ ພົວພັນກ່ຽວກັບວຽກງານຄຸ້ມຄອງ ການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່ ແລະ ການຄ້ຳປະກັນການກູ້ຢືມ ຢູ່ ສປປ ລາວ.

# ໝວດທີ 2
# ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ

## ມາດຕາ 5 ຫຼັກການໃນການສ້າງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ

ການສ້າງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ;

2. ຮັບປະກັນ ຄວາມຍືນຍົງດ້ານງົບປະມານ, ການຊຸກຍູ້ການເຕີບໂຕຂອງເສດຖະກິດ ແລະ ການຄຸ້ມຄອງຄວາມສ່ຽງກ່ຽວກັບໜີ້ສິນສາທາລະນະ;

3. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

4. ຮັບປະກັນການມີສ່ວນຮ່ວມ ຂອງກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ມາດຕາ 6 ເນື້ອໃນ ແລະ ຕົວຊີ້ວັດ ຂອງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ

ເນື້ອໃນຂອງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ແລະ ຍັງຕ້ອງກຳນົດຕົວຊີ້ວັດກ່ຽວກັບການຄຸ້ມຄອງໜີ້ສິນສາທາລະນະ.

ຕົວຊີ້ວັດຂອງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ມີ ດັ່ງນີ້:

1. ອັດຕາສ່ວນໜີ້ສິນສາທາລະນະຕໍ່ ລວມຍອດຜະລິດຕະພັນພາຍໃນ (Gross Domestic Product-GDP)ຊຶ່ງແມ່ນການປະເມີນລະດັບໜີ້ສິນສາທາລະນະທຽບໃສ່ການຂະຫຍາຍຕົວຂອງເສດຖະກິດ;

2. ອັດຕາສ່ວນໜີ້ສິນຂອງລັດຖະບານ ຕໍ່ GDP ຊຶ່ງແມ່ນການປະເມີນລະດັບໜີ້ສິນລັດຖະບານທຽບໃສ່ການຂະຫຍາຍຕົວຂອງເສດຖະກິດ;

3. ອັດຕາສ່ວນໜີ້ສິນຕ່າງປະເທດ ຕໍ່ GDP ຊຶ່ງແມ່ນການປະເມີນລະດັບໜີ້ສິນຕ່າງປະເທດ ທຽບໃສ່ການຂະຫຍາຍຕົວຂອງເສດຖະກິດ;

4. ອັດຕາສ່ວນການຊຳລະໜີ້ສິນຂອງລັດຖະບານ ຕໍ່ລາຍຮັບງົບປະມານ ທັງໝົດ ຊຶ່ງແມ່ນການປະເມີນອັດຕາສ່ວນລາຍຮັບຂອງລັດຖະບານ ທີ່ນຳໃຊ້ເຂົ້າໃນການຊຳລະໜີ້ສິນສາທາລະນະ;

5. ອັດຕາສ່ວນການຊຳລະໜີ້ສິນຕ່າງປະເທດ ຕໍ່ການສົ່ງອອກ ຊຶ່ງແມ່ນການປະເມີນຄວາມສາມາດຂອງການຊຳລະໜີ້ສິນຕ່າງປະເທດ ທຽບໃສ່ລາຍຮັບຈາກການສົ່ງອອກ.

**ມາດຕາ 7 ການສ້າງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ**

ກະຊວງການເງິນ ສ້າງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຫ້າປີ ໂດຍປະສານສົມທົບກັບ ທະນາຄານແຫ່ງ ສປປ ລາວ, ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານພິຈາລະນາ ແລ້ວສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງ.

ແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຕ້ອງໄດ້ຮັບການທົບທວນ ທຸກປີ ແລະ ປັບປຸງ ໃນກໍລະນີມີຄວາມຈຳເປັນ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງງົບປະມານແຫ່ງລັດ ແລະ ການປ່ຽນແປງທາງດ້ານເສດຖະກິດ.

**ມາດຕາ 8 ການພິຈາລະນາ ແລະ ຮັບຮອງແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ**

ພາຍຫຼັງທີ່ລັດຖະບານ ສະເໜີແຜນຍຸດທະສາດການຄຸ້ມຄອງໜີ້ສິນສາທາລະນະ ຄະນະປະຈຳສະພາແຫ່ງຊາດຄົ້ນຄວ້າ ແລະ ພິຈາລະນານຳສະເໜີ ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ.

## ໝວດທີ 3
## ການກູ້ຢືມໂດຍກົງ

**ມາດຕາ 9 ການກູ້ຢືມໂດຍກົງ**

ການກູ້ຢືມໂດຍກົງ ແມ່ນ ການກູ້ຢືມລະຫວ່າງ ລັດຖະບານ ກັບຜູ້ໃຫ້ກູ້ຢືມ ດ້ວຍການເຮັດສັນຍາໃນເງື່ອນໄຂຜ່ອນຜັນ ຫຼື ໃນເງື່ອນໄຂທຸລະກິດ.

ກະຊວງການເງິນ ເປັນຜູ້ຕາງໜ້າລັດຖະບານ ໃນການດຳເນີນຂັ້ນຕອນການກູ້ຢືມໂດຍກົງ.

**ມາດຕາ 10 ເປົ້າໝາຍການກູ້ຢືມໂດຍກົງ**

ເປົ້າໝາຍການກູ້ຢືມໂດຍກົງ ປະກອບມີ ດັ່ງນີ້:

1. ການກູ້ຢືມໂດຍກົງ ສຳລັບແຜນງານ ຫຼື ໂຄງການ;
2. ການກູ້ຢືມໂດຍກົງ ເພື່ອດຸ່ນດ່ຽງງົບປະມານ;
3. ການກູ້ຢືມໂດຍກົງ ເພື່ອບໍລິຫານສະພາບຄ່ອງໜີ້ສິນ;
4. ການກູ້ຢືມໂດຍກົງ ເພື່ອປັບໂຄງສ້າງໜີ້ສິນ.

### ກ. ການກູ້ຢືມໂດຍກົງ ສຳລັບແຜນງານ ຫຼື ໂຄງການ

**ມາດຕາ 11 ຂັ້ນຕອນການກູ້ຢືມໂດຍກົງ ສຳລັບແຜນງານ ຫຼື ໂຄງການ**

ການກູ້ຢືມໂດຍກົງ ສຳລັບແຜນງານ ຫຼື ໂຄງການ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການປະເມີນ ແຜນງານ ຫຼື ໂຄງການດ້ານເຕັກນິກ;
2. ການປະເມີນຄວາມອາດສາມາດທາງດ້ານງົບປະມານ;
3. ການເຈລະຈາ ແລະ ເຊັນສັນຍາກູ້ຢືມ.

**ມາດຕາ 12 ການປະເມີນ ແຜນງານ ຫຼື ໂຄງການດ້ານເຕັກນິກ**

ກະຊວງການເງິນ ເປັນຜູ້ປະເມີນແຜນງານ ຫຼື ໂຄງການດ້ານເຕັກນິກ ຂອງແຜນງານ ຫຼືໂຄງການ ທີ່ຢູ່ໃນແຜນການລົງທຶນຂອງລັດ ໂດຍອີງໃສ່ບົດວິພາກທາງດ້ານເສດຖະກິດ-ເຕັກນິກ ທີ່ຜ່ານການຮັບຮອງ ຈາກຊ່ຽວຊານ ທີ່ໄດ້ຮັບການຍອມຮັບຈາກສາກົນ ຕາມການສະເໜີຂອງກະຊວງ, ອົງການ ແລະ ອົງການປົກຄອງ ຂັ້ນແຂວງ.

ກະຊວງການເງິນ ປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບ ການຄັດເລືອກ ແຜນງານ ຫຼື ໂຄງການ ທີ່ຢູ່ໃນແຜນການລົງທຶນຂອງລັດ ໂດຍບໍ່ໃຫ້ເກີນ ເພດານການກູ້ຢືມ ໃນແຕ່ລະປີ ພ້ອມທັງ ໃຫ້ແຈ້ງຜົນກ່ຽວກັບການຄັດເລືອກ.

**ມາດຕາ 13 ການປະເມີນຄວາມອາດສາມາດທາງດ້ານການເງິນ**

ພາຍຫຼັງ ໂຄງການໄດ້ຮັບການຈັດເຂົ້າໃນແຜນການລົງທຶນຂອງລັດ ໃຫ້ປະເມີນຄວາມອາດສາມາດ ທາງດ້ານການເງິນ ດັ່ງນີ້:

1. ປະເມີນ ຜົນກະທົບ ແລະ ຄວາມສ່ຽງດ້ານການເງິນ ເປັນຕົ້ນ ມູນຄ່າການກູ້ຢືມ, ໄລຍະເວລາ ການຊຳລະຄືນຕົ້ນທຶນ, ດອກເບ້ຍ ແລະ ເງື່ອນໄຂອື່ນທີ່ມີຜົນກະທົບຕໍ່ຖານະໜີ້ສິນສາທາລະນະ, ຄວາມສອດຄ່ອງ ກັບເພດານການກູ້ຢືມ ໃນແຕ່ລະປີ;

2. ສັງລວມ ແຜນງານ ຫຼື ໂຄງການເຂົ້າໃນແຜນການກູ້ຢືມໂດຍອີງໃສ່ເພດານການກູ້ຢືມໃນແຕ່ລະປີ;

3. ປຶກສາຫາລືກັບຜູ້ໃຫ້ທຶນ ເພື່ອເອົາແຜນງານ ຫຼື ໂຄງການ ເຂົ້າໃນແຜນຍຸດທະສາດຂອງ ລັດຖະບານ ກ່ຽວກັບການຮ່ວມມື ລະຫວ່າງ ລັດຖະບານ ແລະ ຜູ້ໃຫ້ທຶນ;

4. ສະເໜີລັດຖະບານ ພິຈາລະນາ ຮັບຮອງ ບັນຊີແຜນງານ ຫຼື ໂຄງການ ສຳລັບການກູ້ຢືມ ປະຈຳປີ.

**ມາດຕາ 14 ການເຈລະຈາ ແລະ ການເຊັນສັນຍາເງິນກູ້ຢືມ**

ກະຊວງການເງິນ ແຕ່ງຕັ້ງຄະນະເຈລະຈາສັນຍາເງິນກູ້ຢືມ ເພື່ອດຳເນີນການເຈລະຈາກັບຜູ້ໃຫ້ທຶນ ແລະ ລາຍງານຜົນການເຈລະຈາ ຕໍ່ ລັດຖະບານ ເພື່ອພິຈາລະນາ.

ພາຍຫຼັງ ລັດຖະບານຮັບຮອງຜົນການເຈລະຈາແລ້ວ ກະຊວງການເງິນ ເປັນຜູ້ເຊັນສັນຍາເງິນກູ້ຕາມ ການ ມອບສິດຂອງລັດຖະບານ.

## ຂ. ການກູ້ຢືມໂດຍກົງ ເພື່ອດຸນດ່ຽງງົບປະມານແຫ່ງລັດ

**ມາດຕາ 15 ຂັ້ນຕອນການກູ້ຢືມໂດຍກົງ ເພື່ອດຸນດ່ຽງງົບປະມານແຫ່ງລັດ**

ການກູ້ຢືມໂດຍກົງ ເພື່ອດຸນດ່ຽງງົບປະມານແຫ່ງລັດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການປະສານສົມທົບກັບຜູ້ໃຫ້ທຶນ ແລະ ບັນດາຂະແໜງການ;
2. ການລາຍງານຜົນການປະເມີນຂັ້ນສຸດທ້າຍການກະກຽມແຜນງານ;
3. ການເຈລະຈາ ແລະ ເຊັນສັນຍາເງິນກູ້;
4. ປະຕິບັດຂັ້ນຕອນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 16 ການປະສານສົມທົບກັບຜູ້ໃຫ້ທຶນ ແລະ ບັນດາຂະແໜງການ**

ກະຊວງການເງິນ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນ ແຂວງ ທີ່ກ່ຽວຂ້ອງ ແລ້ວປະສານສົມທົບກັບຜູ້ໃຫ້ທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ເປັນ ເອກະພາບ ກ່ຽວກັບເນື້ອໃນຂອງແຜນງານ ເປັນຕົ້ນ ໜ້າວຽກຕົ້ນຕໍ ຫຼື ໜ້າວຽກຫຼັກ ທີ່ເປັນຍຸດ ທະສາດ, ນະໂຍບາຍ ຂອງແຕ່ລະຂະແໜງການ, ເນື້ອໃນທີ່ພົວພັນກັບເສດຖະກິດມະຫາພາກ.

ສຳລັບແຜນງານ ທີ່ສາມາດນຳໄປປະສານສົມທົບໄດ້ນັ້ນ ຕ້ອງເປັນແຜນງານທີ່ ຢູ່ໃນຍຸດທະສາດ ການ ຮ່ວມມືກັບບັນດາຜູ້ໃຫ້ທຶນ ທີ່ລັດຖະບານ ໄດ້ຮັບຮອງ.

**ມາດຕາ 17 ການລາຍງານຜົນການປະເມີນຂັ້ນສຸດທ້າຍການກະກຽມແຜນງານ**

ຄະນະຮັບຜິດຊອບແຜນງານ ຂອງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ຕ້ອງລາຍງານ ກະຊວງການເງິນ ກ່ຽວກັບຜົນການປະເມີນຂັ້ນສຸດທ້າຍການກະກຽມແຜນງານ ເພື່ອນຳສະເໜີ ລັດຖະບານ ພິຈາລະນາຮັບຮອງ, ອະນຸຍາດໃຫ້ເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມກັບ ຜູ້ໃຫ້ທຶນ.

**ມາດຕາ 18 ການເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມ**

ກະຊວງການເງິນ ແຕ່ງຕັ້ງຄະນະເຈລະຈາສັນຍາເງິນກູ້ຢືມ ເພື່ອດຳເນີນການເຈລະຈາກັບຜູ້ໃຫ້ທຶນ ແລະ ລາຍງານຜົນການເຈລະຈາ ຕໍ່ລັດຖະບານ ເພື່ອພິຈາລະນາ.

ພາຍຫຼັງ ລັດຖະບານຮັບຮອງຜົນການເຈລະຈາແລ້ວ ກະຊວງການເງິນ ເປັນຜູ້ເຊັນສັນຍາເງິນກູ້ຢືມຕາມ ການ ມອບສິດຂອງລັດຖະບານ.

## ຄ. ການກູ້ຢືມໂດຍກົງ ເພື່ອບໍລິຫານສະພາບຄ່ອງໜີ້ສິນ

**ມາດຕາ 19 ຂັ້ນຕອນການກູ້ຢືມໂດຍກົງ ເພື່ອບໍລິຫານສະພາບຄ່ອງໜີ້ສິນ**

ການກູ້ຢືມໂດຍກົງ ເພື່ອບໍລິຫານສະພາບຄ່ອງໜີ້ສິນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການທາບທາມແຫຼ່ງທຶນ;
2. ການເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມ;
3. ການປະຕິບັດຂັ້ນຕອນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 20 ການທາບທາມແຫຼ່ງທຶນ**

ກະຊວງການເງິນ ດຳເນີນການທາບທາມແຫຼ່ງທຶນຈາກສະຖາບັນການເງິນ ທັງພາຍໃນ, ສາກົນ ແລະ ບັນດາ ປະເທດຄູ່ຮ່ວມມືສອງຝ່າຍ ໂດຍອີງຕາມມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງທິດທາງແຜນ ງົບປະມານ ແຫ່ງລັດ ປະຈຳປີ.

**ມາດຕາ 21 ການເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມ**

ກະຊວງການເງິນ ແຕ່ງຕັ້ງຄະນະເຈລະຈາສັນຍາເງິນກູ້ຢືມ ເພື່ອດຳເນີນການເຈລະຈາກັບຜູ້ໃຫ້ທຶນ ແລະ ລາຍງານຜົນການເຈລະຈາ ຕໍ່ລັດຖະບານ ເພື່ອພິຈາລະນາ.

ພາຍຫຼັງ ລັດຖະບານຮັບຮອງຜົນການເຈລະຈາແລ້ວ ກະຊວງການເງິນ ເປັນຜູ້ເຊັນສັນຍາເງິນກູ້ຢືມ ຕາມການມອບສິດຂອງລັດຖະບານ.

## ງ. ການກູ້ຢືມໂດຍກົງ ເພື່ອປັບໂຄງສ້າງໜີ້ສິນ

**ມາດຕາ 22 ຂັ້ນຕອນການກູ້ຢືມໂດຍກົງ ເພື່ອປັບໂຄງສ້າງໜີ້ສິນ**

ການກູ້ຢືມໂດຍກົງ ເພື່ອປັບໂຄງສ້າງໜີ້ສິນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຄົ້ນຄວ້າປະເພດໜີ້ສິນ;
2. ການຊອກຫາແຫຼ່ງທຶນ;
3. ການເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມ;
4. ການປະຕິບັດຂັ້ນຕອນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 23 ການຄົ້ນຄວ້າປະເພດໜີ້ສິນ**

ກະຊວງການເງິນ ເປັນຜູ້ຄົ້ນຄວ້າປະເພດໜີ້ສິນ ໂດຍແຍກຕາມຍອດໜີ້ສິນ, ສະກຸນເງິນ, ອັດຕາດອກເບ້ຍ, ໄລຍະການກູ້ຢືມ ແລະ ເງື່ອນໄຂທີ່ຈະກຳນົດເຂົ້າໃນແຜນປັບໂຄງສ້າງໜີ້ສິນ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ພິຈາລະນາ.

**ມາດຕາ 24 ການຊອກຫາແຫຼ່ງທຶນ**

ກະຊວງການເງິນ ຄົ້ນຄວ້າຊອກຫາແຫຼ່ງທຶນ ທີ່ມີເງື່ອນໄຂດີກວ່າ ເປັນຕົ້ນ ແຫຼ່ງທຶນທີ່ມີດອກເບ້ຍຕ່ຳ, ມີໄລຍະກູ້ຢືມຍາວ, ສະກຸນເງິນທີ່ເໝາະສົມ ມາຊຳລະໜີ້ສິນກ່ອນກຳນົດ ເພື່ອປັບໂຄງສ້າງໜີ້ສິນ ເຮັດໃຫ້ພັນທະ ແລະ ຖານະໜີ້ສິນສາທາລະນະດີຂຶ້ນ.

**ມາດຕາ 25 ການເຈລະຈາ ແລະ ເຊັນສັນຍາເງິນກູ້ຢືມ**

ກະຊວງການເງິນ ແຕ່ງຕັ້ງຄະນະເຈລະຈາສັນຍາເງິນກູ້ຢືມ ເພື່ອດຳເນີນການເຈລະຈາກັບຜູ້ໃຫ້ທຶນ ແລະ ລາຍງານຜົນການເຈລະຈາ ຕໍ່ລັດຖະບານ ເພື່ອພິຈາລະນາ.

ພາຍຫຼັງ ລັດຖະບານຮັບຮອງຜົນການເຈລະຈາແລ້ວ ກະຊວງການເງິນ ເປັນຜູ້ເຊັນສັນຍາເງິນກູ້ ຕາມການ ມອບສິດຂອງລັດຖະບານ.

**ມາດຕາ 26 ການສະເໜີຂໍຄຳເຫັນທາງດ້ານກົດໝາຍ ການກູ້ຢືມໂດຍກົງ**

ກະຊວງການເງິນ ສະເໜີກະຊວງຍຸຕິທຳ ອອກຄຳເຫັນທາງດ້ານກົດໝາຍຕໍ່ການກູ້ຢືມໂດຍກົງ ພາຍຫຼັງການເຊັນສັນຍາເງິນກູ້ຢືມ ເພື່ອໃຫ້ສັນຍາເງິນກູ້ຢືມທີ່ນຳໃຊ້ເຂົ້າໃນເປົ້າໝາຍການກູ້ຢືມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ມີຜົນສັກສິດ ຍົກເວັ້ນກໍລະນີຜູ້ໃຫ້ກູ້ຢືມບໍ່ຮຽກຮ້ອງໃຫ້ມີການຂໍຄຳເຫັນທາງດ້ານກົດໝາຍ.

## ໝວດທີ 4
## ການໃຫ້ກູ້ຢືມຕໍ່

**ມາດຕາ 27 ການໃຫ້ກູ້ຢືມຕໍ່**

ການໃຫ້ກູ້ຢືມຕໍ່ ແມ່ນການນຳໃຊ້ເງິນກູ້ຢືມທີ່ລັດຖະບານໄດ້ກູ້ຢືມ ໃຫ້ລັດວິສາຫະກິດ, ສະຖາບັນການເງິນຂອງລັດ ກູ້ຢືມຕໍ່ ເພື່ອລົງທຶນໃນໂຄງການທີ່ມີຜົນຕອບແທນສູງ ທາງດ້ານເສດຖະກິດ-ການເງິນ ຜູ້ກູ້ຢືມຕໍ່ນັ້ນ ຕ້ອງຊຳລະໜີ້ສິນໃຫ້ຄົບຖ້ວນຕາມສັນຍາກູ້ຢືມຕໍ່.

ກະຊວງການເງິນ ເປັນຜູ້ຄຸ້ມຄອງ ການໃຫ້ກູ້ຢືມຕໍ່ ໃນຖານະເປັນຜູ້ຕາງໜ້າລັດຖະບານ.

ການໃຫ້ກູ້ຢືມຕໍ່ ຕ້ອງຢູ່ໃນແຜນງົບປະມານປະຈຳປີ ທີ່ສະພາແຫ່ງຊາດຮັບຮອງ, ກໍລະນີການໃຫ້ກູ້ຢືມຕໍ່ຫາກບໍ່ຢູ່ໃນແຜນທີ່ສະພາແຫ່ງຊາດຮັບຮອງ, ລັດຖະບານ ຕ້ອງຄົ້ນຄວ້າເປັນສະເພາະແລ້ວ ນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 28 ຂັ້ນຕອນການໃຫ້ກູ້ຢືມຕໍ່**

ຂັ້ນຕອນການໃຫ້ກູ້ຢືມຕໍ່ ມີ ດັ່ງນີ້:

1. ກະຊວງການເງິນ ຄົ້ນຄວ້າເງື່ອນໄຂຂອງການກູ້ຢືມຕໍ່ ພາຍຫຼັງສັນຍາກູ້ຢືມ ລະຫວ່າງ ກະຊວງການເງິນ ແລະ ຜູ້ໃຫ້ທຶນ ມີຜົນສັກສິດ ຊຶ່ງມີການເຂົ້າຮ່ວມຂອງ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໂດຍອີງໃສ່ ເງື່ອນໄຂການໃຫ້ກູ້ຢືມຕໍ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ແລະ ເງື່ອນໄຂທາງດ້ານການເງິນຂອງເງິນກູ້ຢືມຕໍ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງດຳລັດສະບັບນີ້;
2. ກະຊວງການເງິນ ລາຍງານລັດຖະບານ ເພື່ອພິຈາລະນາກ່ຽວກັບການອະນຸມັດການເຊັນສັນຍາກູ້ຢືມຕໍ່.

**ມາດຕາ 29 ເງື່ອນໄຂທາງດ້ານການເງິນຂອງເງິນກູ້ຢືມຕໍ່**

ເງື່ອນໄຂທາງດ້ານການເງິນຂອງເງິນກູ້ຢືມຕໍ່ ມີ ດັ່ງນີ້:

1. ອັດຕາດອກເບ້ຍ, ຄ່າທຳນຽມ ແລະ ຄ່າປັບໃໝ ຂອງການກູ້ຢືມຕໍ່ ໃຫ້ປະຕິບັດຕາມສັນຍາແມ່;

2. ໃນກໍລະນີ ອັດຕາດອກເບ້ຍ, ຄ່າທຳນຽມ ແລະ ຄ່າປັບໃໝ ຂອງການກູ້ຢືມຕໍ່ ບໍ່ໄດ້ກຳນົດໄວ້ໃນສັນຍາແມ່ ໃຫ້ລາຍງານລັດຖະບານ ເພື່ອພິຈາລະນາ ຕາມແຕ່ລະກໍລະນີ ດັ່ງນີ້:

2.1 ໃນກໍລະນີເປົ້າໝາຍການນຳໃຊ້ເງິນກູ້ຢືມຕໍ່ ເພື່ອລົງທຶນເຂົ້າໃນແຜນງານ ຫຼື ໂຄງການ ທີ່ຕິດພັນກັບການປະຕິບັດນະໂຍບາຍລຶບລ້າງຄວາມທຸກຍາກ ຫຼື ການບໍລິການສາທາລະນະຂອງລັດຖະບານ ໃຫ້ປະຕິບັດ ຕາມສັນຍາແມ່ ສຳລັບ ການກໍ່ສ້າງ ແລະ ຜະລິດນ້ຳປະປາ ເພື່ອຊຸມຊົນ, ການກໍ່ສ້າງສາຍສົ່ງໄຟຟ້າເຂົ້າຫາເຂດ ຊົນນະບົດຫ່າງໄກສອກຫຼີກ, ໂຄງການສິນເຊື່ອ ຊົນນະບົດ ເພື່ອສົ່ງເສີມເສີມການຜະລິດກະສິກຳ ແລະ ໂຄງການ ອື່ນທີ່ກ່ຽວຂ້ອງ;

2.2 ໃນກໍລະນີເປົ້າໝາຍການນຳໃຊ້ເງິນກູ້ຢືມຕໍ່ ເພື່ອລົງທຶນເຂົ້າໃນແຜນງານ ຫຼື ໂຄງການທີ່ມີຜົນຕອບແທນທາງດ້ານເສດຖະກິດ ທີ່ສາມາດສ້າງລາຍຮັບທົດແທນໜີ້ສິນດ້ວຍຕົນເອງໄດ້ ໃຫ້ຄິດໄລ່ບວກເພີ່ມດອກເບ້ຍ ໜຶ່ງຈຸດຫ້າສ່ວນຮ້ອຍ (1.5%) ຕໍ່ປີ, ຄ່າປັບໃໝ ສູນຈຸດຫ້າສ່ວນຮ້ອຍ (0.5%) ຕໍ່ວັນ ແລະ ຄ່າຄຸ້ມຄອງເງິນກູ້ ໜຶ່ງສ່ວນຮ້ອຍ (1%) ໃນສັນຍາກູ້ຢືມຕໍ່ ຈາກສັນຍາແມ່.

**ມາດຕາ 30 ຄວາມຮັບຜິດຊອບຂອງຜູ້ໃຫ້ກູ້ຢືມຕໍ່**

ນອກຈາກຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ແລ້ວ ຜູ້ໃຫ້ກູ້ຢືມຕໍ່ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ທວງຄືນເງິນກູ້ຢືມຕໍ່ ຈາກລັດວິສາຫະກິດ, ວິສາຫະກິດ ແລະ ພາກສ່ວນອື່ນທີ່ກູ້ຢືມຕໍ່ ຕາມສັນຍາ ເພື່ອຮັບປະກັນການຊຳລະຄືນ;

2. ປະເມີນປະສິດທິພາບຂອງໂຄງການເງິນກູ້ ຢ່າງເປັນປົກກະຕິ;

3. ສະເໜີລັດຖະບານ ປັບປຸງ, ໂຈະ ຫຼື ນຳໃຊ້ມາດຕະການ ຕໍ່ບັນດາແຜນງານ ຫຼື ໂຄງການ ທີ່ນຳໃຊ້ເງິນກູ້ຢືມຕໍ່ ບໍ່ຖືກຕ້ອງຕາມເປົ້າໝາຍ.

**ມາດຕາ 31 ຄວາມຮັບຜິດຊອບຂອງຜູ້ກູ້ຢືມຕໍ່**

ນອກຈາກຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ ແລ້ວ ຜູ້ກູ້ຢືມຕໍ່ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ຊຳລະຄ່າທຳນຽມເງິນກູ້ຕາມສັນຍາ ດ້ວຍການໂອນເງິນເຂົ້າບັນຊີງົບປະມານແຫ່ງລັດ ຢູ່ທະນາຄານແຫ່ງ ສປປ ລາວ ພາຍຫຼັງສຳເລັດການເຊັນສັນຍາກູ້ຢືມຕໍ່ ພ້ອມທັງສົ່ງຫຼັກຖານການໂອນເງິນໃຫ້ກະຊວງການເງິນ;

2. ລາຍງານ ຖານະການເງິນຂອງຕົນ ແລະ ຄວາມສ່ຽງຕ່າງໆ ລວມທັງຜົນການດຳເນີນທຸລະກິດໃຫ້ກະຊວງ ການເງິນ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ປະຈຳ ຫົກເດືອນ.

## ໝວດທີ 5
## ການຄ້ຳປະກັນ

**ມາດຕາ 32 ການຄ້ຳປະກັນ**

ການຄ້ຳປະກັນ ແມ່ນ ການອອກໜັງສື ໂດຍລັດຖະບານ ເພື່ອຄ້ຳປະກັນການກູ້ຢືມຂອງລັດວິສາຫະກິດ, ວິສາຫະກິດ ແລະ ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 33 ເງື່ອນໄຂການຄໍ້າປະກັນໃຫ້ລັດວິສາຫະກິດ**

ເງື່ອນໄຂການຄໍ້າປະກັນໃຫ້ລັດວິສາຫະກິດ ມີ ດັ່ງນີ້:

1. ປະຕິບັດໂຄງການ ທີ່ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຫຼື ໂຄງການບູລິມະສິດ ທີ່ລັດຖະບານສົ່ງເສີມ ຊຶ່ງເປັນໂຄງການບໍລິການສາທາລະນະປະໂຫຍດ, ມີຜົນຕອບແທນທາງດ້ານເສດຖະກິດ-ສັງຄົມສູງ ແລະ ຢູ່ໃນແຜນການກູ້ຢືມ;

2. ມີແຜນດໍາເນີນງານ ແລະ ການຄຸ້ມຄອງບໍລິຫານການເງິນ ລວມທັງ ເງິນກູ້ຢືມທີ່ໄດ້ຮັບການຄໍ້າປະກັນ ຢ່າງຈະແຈ້ງ;

3. ບໍ່ມີປະຫວັດໜີ້ເສຍ, ບໍ່ຢູ່ໃນບັນຊີດໍາຂອງທະນາຄານ ພາຍໃນ ຫຼື ຕ່າງປະເທດ, ມີບົດລາຍງານຖານະ ການເງິນ ທີ່ຜ່ານການກວດສອບຈາກ ອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະລະ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ມີຜົນກໍາໄລຢ່າງໜ້ອຍ ສາມປີຕໍ່ເນື່ອງ;

4. ມີຊັບສິນ ທີ່ມີມູນຄ່າຫຼາຍກວ່າ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນເງິນກູ້ຢືມ ທີ່ໄດ້ຮັບການຄໍ້າປະກັນ ໂດຍຜ່ານການຕີລາຄາຊັບສິນຈາກ ທະນາຄານທຸລະກິດ ຫຼື ບໍລິສັດປະເມີນຊັບສິນ ທີ່ມີເງື່ອນໄຂຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ມີປະສົບການ ແລະ ຜົນງານດີເດັ່ນ ໃນການປະຕິບັດໂຄງການທີ່ຄ້າຍຄືກັນ;

6. ມີລາຍຮັບພຽງພໍໃນການຊໍາລະຕົ້ນທຶນ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ.

**ມາດຕາ 34 ເງື່ອນໄຂການຄໍ້າປະກັນໃຫ້ວິສາຫະກິດ**

ວິສາຫະກິດ ທີ່ຈະໄດ້ຮັບການຄໍ້າປະກັນ ນອກຈາກເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 33 ຂອງດໍາລັດສະບັບນີ້ແລ້ວ ຍັງມີເງື່ອນໄຂ ດັ່ງນີ້:

1. ເປັນວິສາຫະກິດ ທີ່ຈົດທະບຽນ ແລະ ມີທີ່ຕັ້ງວິສາຫະກິດ ຢູ່ ສປປ ລາວ ຊຶ່ງເຈົ້າຂອງວິສາຫະກິດ ຖື ສັນຊາດ ລາວ ແລະ ມີພູມລໍາເນົາ ຢູ່ ສປປ ລາວ;

2. ມີຊັບສິນທີ່ສາມາດຂາຍໄດ້ໃນທ້ອງຕະຫຼາດ ມາຄໍ້າປະກັນນໍາລັດຖະບານ ຊຶ່ງຊັບສິນດັ່ງກ່າວ ຕ້ອງມີມູນຄ່າຫຼາຍກວ່າ ສາມສິບສ່ວນຮ້ອຍ (30%) ຂອງຈໍານວນເງິນກູ້ຢືມ ທີ່ໄດ້ຮັບການຄໍ້າປະກັນ ໂດຍຜ່ານ ການຕີລາຄາຊັບສິນຈາກ ທະນາຄານທຸລະກິດ ຫຼື ບໍລິສັດປະເມີນຊັບສິນ ທີ່ມີເງື່ອນໄຂຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 35 ເງື່ອນໄຂການຄໍ້າປະກັນໃຫ້ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ເງື່ອນໄຂການຄໍ້າປະກັນ ໃຫ້ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນມາດຕາ 33 ຂອງດໍາລັດສະບັບນີ້ ສໍາລັບລັດວິສາຫະກິດ;

2. ມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນມາດຕາ 33 ແລະ 34 ຂອງດໍາລັດສະບັບນີ້ ສໍາລັບວິສາຫະກິດ.

**ມາດຕາ 36 ການສະເໜີອອກໜັງສືຄໍ້າປະກັນ**

ລັດວິສາຫະກິດ, ວິສາຫະກິດ ແລະ ລັດວິສາຫະກິດ ຫຼື ວິສາຫະກິດທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ມີຈຸດປະສົງຂໍການຄໍ້າປະກັນ ໃຫ້ຍື່ນໜັງສືສະເໜີ ຕໍ່ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນໍາສະເໜີກະຊວງການເງິນ ເພື່ອປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 33 ແລະ 34 ຂອງດໍາລັດສະບັບນີ້.

**ມາດຕາ 37 ເອກະສານປະກອບການສະເໜີອອກໜັງສືຄໍ້າປະກັນ**

ເອກະສານປະກອບການສະເໜີອອກໜັງສືຄໍ້າປະກັນ ມີ ດັ່ງນີ້:

1. ໜັງສືສະເໜີຂໍການຄໍ້າປະກັນ;
2. ບົດສຶກສາ ແຜນງານ ຫຼື ໂຄງການ ລະອຽດ;
3. ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ທີ່ໄດ້ຮັບການຢັ້ງຢືນ ຈາກບໍລິສັດທີ່ປຶກສາສະເພາະດ້ານ ທີ່ສາກົນຍອມຮັບ ແລະ ຜ່ານການຮັບຮອງຈາກກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ;
4. ບົດປະເມີນມູນຄ່າ ແລະ ເງື່ອນໄຂທາງດ້ານການເງິນ ຂອງເງິນກູ້ຢືມທີ່ສະເໜີຂໍຄໍ້າປະກັນ ທີ່ຈະມີຜົນກະທົບຕໍ່ຖານະໜີ້ສິນຂອງລັດວິສາຫະກິດ, ວິສາຫະກິດ ແລະ ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
5. ບົດລາຍງານການເງິນ ທີ່ໄດ້ຜ່ານການກວດສອບຈາກອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະລະ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ສາມປີ ຄືນຫຼັງ;
6. ຮ່າງສັນຍາກູ້ຢືມ;
7. ຮ່າງສັນຍາຮ່ວມທຶນ ສໍາລັບລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
8. ເອກະສານອື່ນທີ່ເຫັນວ່າ ມີຄວາມຈໍາເປັນ.

**ມາດຕາ 38 ການພິຈາລະນາອອກໜັງສືຄໍ້າປະກັນ**

ພາຍຫຼັງ ໄດ້ຮັບໜັງສືສະເໜີຈາກກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:

1. ປະເມີນມູນຄ່າ ແລະ ເງື່ອນໄຂທາງດ້ານການເງິນຂອງເງິນກູ້ຢືມ ທີ່ສະເໜີຂໍຄໍ້າປະກັນ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ຖານະໜີ້ສິນສາທາລະນະ;
2. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກວດກາ ເປົ້າໝາຍ ແລະ ເງື່ອນໄຂ ການຄໍ້າປະກັນການກູ້ຢືມ;
3. ສັງລວມ ແລະ ລາຍງານ ລັດຖະບານ ພິຈາລະນາຕົກລົງ.

**ມາດຕາ 39 ເນື້ອໃນໜັງສືຄໍ້າປະກັນ**

ເນື້ອໃນຂອງໜັງສືຄໍ້າປະກັນ ປະກອບດ້ວຍ:

1. ຊື່ ແລະ ທີ່ຢູ່ ຂອງຜູ້ຄໍ້າປະກັນ;
2. ຊື່ ແລະ ທີ່ຢູ່ ຂອງຜູ້ໄດ້ຮັບການຄໍ້າປະກັນ;
3. ຊື່ຂອງໂຄງການ ຫຼື ແຜນງານ ທີ່ໄດ້ຮັບການຄໍ້າປະກັນ;
4. ມູນຄ່າຄໍ້າປະກັນ;
5. ໄລຍະເວລາ ແລະ ເງື່ອນໄຂ ການຄໍ້າປະກັນ;
6. ຄ່າຄໍ້າປະກັນ;
7. ພັນທະຂອງຜູ້ຄໍ້າປະກັນ ແລະ ຜູ້ໄດ້ຮັບການຄໍ້າປະກັນ;
8. ມາດຕະການຕໍ່ຜູ້ໄດ້ຮັບການຄໍ້າປະກັນ;
9. ການລາຍງານຖານະການເງິນໃນໄລຍະເວລາການຄໍ້າປະກັນ;
10. ການແກ້ໄຂຂໍ້ຂັດແຍ່ງ;
11. ເນື້ອໃນອື່ນທີ່ເຫັນວ່າ ມີຄວາມຈໍາເປັນ.

**ມາດຕາ 40 ຄວາມຮັບຜິດຊອບຂອງຜູ້ຄໍ້າປະກັນ**

ຜູ້ຄໍ້າປະກັນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ຕົນໄດ້ຄໍ້າປະກັນ;

2. ໃຊ້ແທນໜີ້ສິນ ໃນກໍລະນີຜູ້ໄດ້ຮັບການຄໍ້າປະກັນ ບໍ່ສາມາດປະຕິບັດໄດ້ຕາມສັນຍາ ໂດຍມີການຢັ້ງຢືນ ຈາກຜູ້ໄດ້ຮັບການຄໍ້າປະກັນ;

3. ແຈ້ງໃຫ້ຜູ້ໄດ້ຮັບການຄໍ້າປະກັນ ກ່ຽວກັບການໃຊ້ແທນໜີ້ສິນ ທີ່ຕົນໄດ້ປະຕິບັດແລ້ວ;

4. ທວງເອົາຕົ້ນທຶນ ແລະ ດອກເບ້ຍ ທີ່ຕົນໄດ້ໃຊ້ແທນຈາກຜູ້ໄດ້ຮັບການຄໍ້າປະກັນ ລວມທັງຄ່າໃຊ້ຈ່າຍອື່ນ ເປັນຕົ້ນ ຄ່າປັບໃໝ, ຄ່າທໍານຽມ ຖ້າມີ.

ສໍາລັບລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຜູ້ຄໍ້າປະກັນ ຮັບຜິດຊອບໃຊ້ແທນໜີ້ສິນ ຕາມອັດຕາສ່ວນການຖືຮຸ້ນຂອງລັດວິສາຫະກິດ ຫຼື ຕາມອັດຕາສ່ວນທີ່ລັດຖືຮຸ້ນໃນ ວິສາຫະກິດ ເທົ່ານັ້ນ.

**ມາດຕາ 41 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບການຄໍ້າປະກັນ**

ນອກຈາກຄວາມຮັບຜິດຊອບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະແລ້ວ ຜູ້ໄດ້ຮັບການຄໍ້າປະກັນ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ປະເມີນ ຄວາມສາມາດຊໍາລະໜີ້ສິນ ແລະ ການປະຕິບັດພັນທະອື່ນຂອງຕົນ ລວມທັງການສ້າງແຜນ ບໍລິຫານໜີ້ສິນ ຢ່າງເປັນປົກກະຕິ ແລະ ລາຍງານກະຊວງການເງິນ ປະຈໍາ ຫົກເດືອນ ແລະ ໜຶ່ງປີ;

2. ຊໍາລະໜີ້ສິນໃຫ້ຜູ້ໃຫ້ກູ້ຢືມຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ໃນກໍລະນີບໍ່ສາມາດຊໍາລະໜີ້ສິນໄດ້ຕ້ອງ ປຶກສາຫາລືກັບຜູ້ໃຫ້ກູ້ຢືມ ເພື່ອຊອກຫາວິທີແກ້ໄຂ;

3. ລາຍງານກະຊວງການເງິນ ຢ່າງຊ້າ ເກົ້າສິບວັນ ກ່ອນວັນຊໍາລະ ເພື່ອຊອກຫາວິທີແກ້ໄຂ ໃນກໍລະນີຄາດຄະເນວ່າຈະບໍ່ສາມາດຊໍາລະໜີ້ໄດ້;

4. ໃຊ້ແທນຕົ້ນທຶນ ແລະ ດອກເບ້ຍ ໃຫ້ກະຊວງການເງິນ ລວມທັງຄ່າໃຊ້ຈ່າຍອື່ນ ເປັນຕົ້ນ ຄ່າປັບໃໝ, ຄ່າທໍານຽມ ຖ້າມີ;

5. ມອບຊັບສິນຄໍ້າປະກັນໃຫ້ ກະຊວງການເງິນ ພ້ອມທັງ ປະຕິບັດຕາມມາດຕະການ ທີ່ກ່ຽວຂ້ອງ, ຮັບຜິດຊອບຕາມກົດໝາຍ ແລະ ລະບຽບການ ໃນກໍລະນີ ນໍາໃຊ້ເງິນກູ້ຢືມບໍ່ຖືກເປົ້າໝາຍ, ບໍ່ສາມາດປະຕິບັດພັນທະໄດ້ຢ່າງຄົບຖ້ວນ ຫຼື ຕາມກໍານົດເວລາ ທີ່ກໍ່ໃຫ້ເກີດຜົນເສຍຫາຍ;

6. ລາຍງານ ການນໍາໃຊ້ເງິນກູ້ຢືມ ທີ່ໄດ້ຮັບການຄໍ້າປະກັນ, ການຈັດຕັ້ງປະຕິບັດໂຄງການ ແລະ ຖານະການເງິນຂອງຕົນໃຫ້ ກະຊວງການເງິນ ປະຈໍາ ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ;

7. ໃຊ້ແທນຄ່າເສຍຫາຍໃຫ້ແກ່ຜູ້ໃຫ້ກູ້ຢືມ ຕາມສັນຍາກູ້ຢືມ.

**ມາດຕາ 42 ຄ່າຄໍ້າປະກັນ**

ຜູ້ໄດ້ຮັບການຄໍ້າປະກັນເງິນກູ້ ຕ້ອງຊໍາລະຄ່າຄໍ້າປະກັນເງິນກູ້ ຕາມສະກຸນເງິນທີ່ໄດ້ຮັບການຄໍ້າປະກັນໃຫ້ກະຊວງການເງິນ ໃນອັດຕາ ສອງຈຸດຫ້າສ່ວນຮ້ອຍ (2.5%) ຂອງມູນຄ່າການຄໍ້າປະກັນເງິນກູ້ ໂດຍໂອນເຂົ້າບັນຊີທຶນສໍາຮອງໜີ້ສິນສາທາລະນະ.

## ໝວດທີ 6
## ຂໍ້ມູນ ຂ່າວສານ

**ມາດຕາ 43 ການສະໜອງ ຂໍ້ມູນ ຂ່າວສານ**

ທະນາຄານທຸລະກິດພາຍໃນ, ລັດວິສາຫະກິດ, ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ສະໜອງຂໍ້ມູນ ຂ່າວສານ ໃຫ້ກະຊວງການເງິນ ດັ່ງນີ້:

1. ທະນາຄານທຸລະກິດພາຍໃນ ສະໜອງມູນຄ່າສັນຍາເງິນກູ້, ຍອດໜີ້ສິນ, ແຜນຊຳລະໜີ້ສິນ ທີ່ກະຊວງການເງິນມີຕໍ່ທະນາຄານທຸລະກິດພາຍໃນ ປະຈຳງວດ ແລະ ປະຈຳປີ ໂດຍສັງລວມແຍກໃຫ້ເປັນແຕ່ລະເດືອນ ເພື່ອຮັບປະກັນຄວາມເປັນເອກະພາບທາງດ້ານຂໍ້ມູນໜີ້ສິນ;

2. ລັດວິສາຫະກິດ ສະໜອງຂໍ້ມູນໜີ້ສິນທີ່ມີຕໍ່ກະຊວງການເງິນ ແລະ ໜີ້ສິນທີ່ກະຊວງການເງິນ ຄ້ຳປະກັນ ປະຈຳງວດ ແລະ ປະຈຳປີ ໂດຍສັງລວມແຍກໃຫ້ເຫັນເປັນແຕ່ລະເດືອນ;

3. ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງ ທີ່ຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ນຳໃຊ້ເງິນກູ້ຢືມໂດຍກົງ ສະໜອງຂໍ້ມູນແຜນຄາດຄະເນການເບີກຖອນເງິນ, ຕົວເລກການເບີກຖອນເງິນກູ້ຢືມໂດຍກົງທີ່ໄດ້ຕັດບັນຊີຕົວຈິງຈາກຜູ້ໃຫ້ທຶນ ເປັນແຕ່ລະງວດ ແລະ ກ່ອນການຂໍເບີກຖອນໃນງວດຕໍ່ໄປ.

ນອກຈາກ ການສະໜອງຂໍ້ມູນກ່ຽວກັບການກູ້ຢືມໂດຍກົງ ແລະ ການຄ້ຳປະກັນການກູ້ຢືມແລ້ວ ທະນາຄານທຸລະກິດພາຍໃນ, ລັດວິສາຫະກິດ, ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ຍັງຕ້ອງສະໜອງຂໍ້ມູນກ່ຽວກັບການໃຫ້ກູ້ຢືມຕໍ່ ໃຫ້ກະຊວງການເງິນ.

**ມາດຕາ 44 ການບັນທຶກ ຂໍ້ມູນ ຂ່າວສານ**

ກະຊວງການເງິນ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການ ບັນທຶກຂໍ້ມູນ ຂ່າວສານ ການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່, ການຄ້ຳປະກັນການກູ້ຢືມ ແລະ ຂໍ້ມູນ ຂ່າວສານ ອື່ນທີ່ກ່ຽວຂ້ອງ ເຂົ້າໃນຖານຂໍ້ມູນໜີ້ສິນສາທາລະນະ ດັ່ງນີ້:

1. ມູນຄ່າ ແລະ ເງື່ອນໄຂທາງດ້ານການເງິນຂອງສັນຍາເງິນກູ້ ໃຫ້ສຳເລັດພາຍໃນ ສິບຫ້າວັນ ພາຍຫຼັງສັນຍາເງິນກູ້ມີຜົນສັກສິດ;

2. ການເບີກຖອນເງິນກູ້ໃຫ້ສຳເລັດພາຍໃນ ສາມສິບວັນ ພາຍຫຼັງການເບີກຖອນ ໂດຍມີການຢັ້ງຢືນຈາກ ກະຊວງ, ອົງການ, ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ແລະ ຜູ້ໃຫ້ທຶນ;

3. ການຊຳລະຕົ້ນທຶນ, ດອກເບ້ຍ ແລະ ຄ່າທຳນຽມ ໃຫ້ສຳເລັດພາຍໃນ ສິບຫ້າວັນ ພາຍຫຼັງສຳເລັດການຊຳລະໜີ້ສິນຕົວຈິງ.

ສຳລັບເງິນກູ້ຢືມຕໍ່ ໃຫ້ບັນທຶກຂໍ້ມູນ ແຜນການຊຳລະຄືນ ແລະ ການເກັບເງິນຄືນເງິນກູ້ຢືມຕໍ່ ເຂົ້າໃນລະບົບການເກັບຮັກສາຂໍ້ມູນຂອງ ກະຊວງການເງິນ.

**ມາດຕາ 45 ການເຜີຍແຜ່ ຂໍ້ມູນ ຂ່າວສານ**

ກະຊວງການເງິນ ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບໜີ້ສິນສາທາລະນະ ຜ່ານວາລະສານໜີ້ສິນປະຈຳປີ ໃນເວັບໄຊທາງການຂອງຕົນ ພາຍໃນວັນທີ 30 ມິຖຸນາ ຂອງແຕ່ລະປີ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນກ່ຽວກັບຍອດໜີ້ສິນສາທາລະນະ ລວມທັງການໃຫ້ກູ້ຢືມຕໍ່ ແລະ ການຄ້ຳປະກັນ;
2. ອັດຕາສ່ວນໜີ້ສິນຕໍ່ລວມຍອດຜະລິດຕະພັນພາຍໃນ (GDP);
3. ອັດຕາສ່ວນການຊຳລະໜີ້ ຕໍ່ລາຍຮັບ;
4. ແຜນການຊຳລະໜີ້ໄລຍະກາງ;
5. ການປະເມີນຄວາມສ່ຽງ;
6. ຂໍ້ມູນກ່ຽວກັບມູນຄ່າເງິນກູ້ ທີ່ຍັງບໍ່ທັນໄດ້ເບີກຖອນ;
7. ຂໍ້ມູນ ໜີ້ຕ້ອງສົ່ງ ແລະ ໜີ້ຄ້າງຊຳລະໂຄງການລົງທຶນຂອງລັດ ທີ່ຖືກຮັບຮອງຈາກ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ.

ກະຊວງການເງິນ ລາຍງານຂໍ້ມູນ ຂ່າວສານ ກ່ຽວກັບ ໜີ້ສິນສາທາລະນະ ຜ່ານໜ້າຈໍສະແດງຜົນ (Dashboard) ໃນເວັບໄຊຂອງຕົນ ຢ່າງເປັນປົກກະຕິ.

ກະຊວງການເງິນ ເຜີຍແຜ່ສະຖິຕິຂໍ້ມູນໜີ້ສິນສາທາລະນະ ໃນເວັບໄຊຂອງຕົນ ບໍ່ໃຫ້ເກີນ ສາມເດືອນ ພາຍຫຼັງການສະຫຼຸບປະຈຳແຕ່ລະ ສາມເດືອນ ເປັນຕົ້ນ ຍອດໜີ້ສິນສາທາລະນະ ລວມທັງມູນຄ່າການອອກ

ພັນທະບັດ, ການກູ້ຢືມ ແລະ ການຄ້ຳປະກັນການກູ້ຢືມ, ການຈັດຕັ້ງປະຕິບັດແຜນການຊຳລະໜີ້ສິນສາທາລະນະ ໃນສາມເດືອນ ຜ່ານມາ ແລະ ແຜນຄາດຄະເນການຊຳລະໜີ້ສິນສາທາລະນະ ໃນສາມເດືອນ ຕໍ່ໜ້າ.

## ໝວດທີ 7
## ຄວາມຮັບຜິດຊອບຂອງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ

### ມາດຕາ 46 ຄວາມຮັບຜິດຊອບຂອງກະຊວງການເງິນ

ກະຊວງການເງິນ ນອກຈາກມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະແລ້ວ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນເພດານການກູ້ຢືມປະຈຳປີ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ແຈ້ງແຜນເພດານການກູ້ຢືມປະຈຳປີ ພາຍໃນງວດທີ 1 ຂອງປີ;

3. ປະເມີນໂຄງການດ້ານເຕັກນິກ ແລະ ຄວາມສາມາດທາງດ້ານການເງິນ ຕາມການສະເໜີຂອງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ;

4. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ເພື່ອປຶກສາຫາລື, ຄັດເລືອກໂຄງການ ແລະ ຈັດເຂົ້າໃນແຜນການກູ້ຢືມ ໃຫ້ສອດຄ່ອງກັບແຜນເພດານການກູ້ຢືມປະຈຳປີ;

5. ແຈ້ງແຜນງານ ຫຼື ໂຄງການ ທີ່ຖືກຈັດເຂົ້າໃນແຜນການກູ້ຢືມໃຫ້ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ;

6. ຄົ້ນຄວ້າການໃຫ້ກູ້ຢືມຕໍ່ ແກ່ລັດວິສາຫະກິດ ແລະ ສະຖາບັນການເງິນຂອງລັດ ເພື່ອສະເໜີລັດຖະບານ ພິຈາລະນາ;

7. ພິຈາລະນາກ່ຽວກັບ ການອະນຸມັດການກູ້ຢືມ ຂອງລັດວິສາຫະກິດ ທີ່ບໍ່ໄດ້ຮັບການຄ້ຳປະກັນຈາກລັດຖະບານ;

8. ກວດກາຖານະການເງິນຂອງລັດວິສາຫະກິດ ແລະ ສະຖາບັນການເງິນຂອງລັດ ທີ່ນຳໃຊ້ເງິນທີ່ໄດ້ຈາກ ການກູ້ຢືມຕໍ່ ບໍ່ມີປະສິດທິຜົນ ເພື່ອສະເໜີລັດຖະບານ ນຳໃຊ້ມາດຕະການຕາມກົດໝາຍ;

9. ຄົ້ນຄວ້າການຄ້ຳປະກັນການກູ້ຢືມ ແກ່ລັດວິສາຫະກິດ, ວິສາຫະກິດ ແລະ ລັດວິສາຫະກິດ ຫຼື ວິສາຫະກິດ ທີ່ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອສະເໜີລັດຖະບານ ພິຈາລະນາ;

10. ສະເໜີລັດຖະບານ ພິຈາລະນາ ໂຈະການເບີກຖອນເງິນ ແຜນງານ ຫຼື ໂຄງການ ທີ່ນຳໃຊ້ ເງິນກູ້ຢືມ, ເງິນກູ້ຢືມຕໍ່ ແລະ ໂຄງການທີ່ມີການຄ້ຳປະກັນການກູ້ຢືມ ບໍ່ຖືກຕ້ອງ, ບໍ່ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງ ການນຳໃຊ້ມາດຕະການອື່ນ;

11. ຕິດຕາມ ກວດກາ ແລະ ປະເມີນ ປະສິດທິຜົນການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ນຳໃຊ້ ເງິນກູ້ຢືມ, ເງິນກູ້ຢືມຕໍ່ ແລະ ໂຄງການທີ່ມີການຄ້ຳປະກັນການກູ້ຢືມ;

12. ແຈ້ງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ໃຫ້ສັງລວມແຜນຄາດຄະເນ ການເບີກຖອນເງິນກູ້ ແລ້ວສະເໜີກະຊວງການເງິນ ເພື່ອກຳນົດເພດານການເບີກຖອນເງິນ ໃນແຕ່ລະປີ;

13. ປະຕິເສດ ການຂໍກູ້ຢືມໃໝ່ຂອງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ໃນກໍລະນີມູນຄ່າ ການສະເໜີຂໍກູ້ຢືມ ເກີນແຜນເພດານການກູ້ຢືມ ຫຼື ມີຜົນກະທົບຕໍ່ຖານະໜີ້ສິນ ໃນແຕ່ລະໄລຍະ, ການນຳໃຊ້ ເງິນກູ້ຜ່ານມາ ບໍ່ຖືກເປົ້າໝາຍ, ບໍ່ມີປະສິດທິຜົນ ແລະ ປະຕິບັດແຜນງານ ຫຼື ໂຄງການ ບໍ່ສຳເລັດຕາມເປົ້າໝາຍ ແລະ ບໍ່ສາມາດປະຕິບັດພັນທະຊຳລະໜີ້ສິນຜ່ານມາ ໄດ້ຕາມແຜນ;

14. ຫຼຸດແຜນລາຍຈ່າຍງົບປະມານຂອງ ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ໃນປີງົບປະມານ ຫຼື ປີງົບປະມານຕໍ່ໄປ ໃນຈຳນວນດຽວກັນກັບຈຳນວນງົບປະມານທີ່ໃຊ້ຈ່າຍ ບໍ່ມີປະສິດທິຜົນ ຫຼື ມີມູນຄ່າທີ່ສູງກວ່າໜ້າວຽກຕົວຈິງ ແລ້ວເອົາຈຳນວນເງິນທີ່ຫຼຸດນັ້ນໄປຊຳລະຕົ້ນທຶນເງິນກູ້ ໃນກໍລະນີການ ນຳໃຊ້ເງິນກູ້ບໍ່ມີປະສິດທິຜົນ ຫຼື ມີການກວດພົບໂຄງການທີ່ມີມູນຄ່າສູງເກີນໜ້າວຽກຕົວຈິງ ໂດຍ

ມີການຢັ້ງຢືນ ຈາກ ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ຫຼື ອົງການກວດກາ ຂອງກະຊວງ ອົງການ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ;

15. ສັງລວມ ແລະ ກວດກາຄວາມຖືກຕ້ອງ ຂອງຂໍ້ມູນ ຂ່າວສານ ກ່ຽວກັບໜີ້ສິນສາທາລະນະ ປະຈຳເດືອນ;

16. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງການກູ້ຢືມໂດຍກົງ, ການໃຫ້ກູ້ຢືມຕໍ່ ແລະ ການຄໍ້າປະກັນການກູ້ຢືມ ຕໍ່ລັດຖະບານ ຢ່າງເປັນປົກກະຕິ.

**ມາດຕາ 47 ຄວາມຮັບຜິດຊອບຂອງກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ**

ກະຊວງ, ອົງການ ແລະ ອົງການປົກຄອງຂັ້ນແຂວງ ນອກຈາກມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະແລ້ວ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີກະຊວງການເງິນ ເພື່ອຂໍ ກູ້ຢືມ, ກູ້ຢືມຕໍ່ ແລະ ການຄໍ້າປະກັນການກູ້ຢືມຂອງຕົນ ແລະ ພາກສ່ວນທີ່ຂຶ້ນກັບຕົນ;

2. ຄຸ້ມຄອງ, ນຳໃຊ້ເງິນກູ້ຢືມໂດຍກົງ, ເງິນກູ້ຢືມຕໍ່ ແລະ ເງິນກູ້ຢືມທີ່ໄດ້ຮັບການຄໍ້າປະກັນ ໃຫ້ຖືກຕ້ອງ ຕາມເປົ້າໝາຍ ລວມທັງ ມີຄວາມຮັບຜິດຊອບຕໍ່ຜົນໄດ້, ຜົນເສຍ ໃນການຈັດຕັ້ງປະຕິບັດບັນດາແຜນງານ ຫຼື ໂຄງການ;

3. ເຂົ້າຮ່ວມໃນການຕິດຕາມ ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ໃຫ້ສຳເລັດ ຕາມແຜນການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 48 ການຈັດຕັ້ງປະຕິບັດ**

ກະຊວງການເງິນ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 49 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 14 ສິງຫາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**